ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

----=====000=====----

ຄະນະກຳມະການຄຸ້ມຄອງຫຼັກຊັບ
Lao Securities Commission

ເລກທີ 032 /ຄຄຊ
ນະຄອນຫຼວງວຽງຈັນ, ວັນທີ 31 AUG 2015

# ຂໍ້ຕົກລົງ
## ວ່າດ້ວຍການກຳນົດອັດຕາຄ່າທຳນຽມການຊື້-ຂາຍຮຸ້ນ ແລະ ການໂອນຮຸ້ນຈົດທະບຽນ ໃນຕະຫຼາດຫຼັກຊັບລາວ

- ອີງຕາມກົດໝາຍວ່າດ້ວຍຫຼັກຊັບ ສະບັບເລກທີ 21/ສພຊ, ລົງວັນທີ 10 ທັນວາ 2012;
- ອີງຕາມແຈ້ງການກ່ຽວກັບອັດຕາຄ່າບໍລິການ ແລະ ອາກອນທີ່ກ່ຽວຂ້ອງກັບທຸລະກິດຫຼັກຊັບ ສະບັບເລກທີ 002/ສຄລຕ, ລົງວັນທີ 31 ທັນວາ 2010;
- ອີງຕາມຂໍ້ຕົກລົງວ່າດ້ວຍຄ່າທຳນຽມທີ່ຕະຫຼາດຫຼັກຊັບລາວຕ້ອງປະຕິບັດຕໍ່ສຳນັກງານ ຄລຕ ສະບັບເລກທີ 018/ຄລຕ, ລົງວັນທີ 24 ທັນວາ 2010;
- ອີງຕາມການຄົ້ນຄວ້າ ແລະ ນຳສະເໜີຂອງ ສຳນັກງານ ຄຄຊ ໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ສະບັບເລກທີ 010/ສຄຄຊ ລົງວັນທີ 29 ມິຖຸນາ 2015.

ຄະນະກຳມະການຄຸ້ມຄອງຫຼັກຊັບ ຕົກລົງ:

ມາດຕາ 1. ການກຳນົດອັດຕາຄ່າທຳນຽມການຊື້-ຂາຍຮຸ້ນ ແລະ ການໂອນຮຸ້ນຈົດທະບຽນ ໃນຕະຫຼາດຫຼັກຊັບລາວຂອງແຕ່ລະພາກສ່ວນ ດັ່ງລຸ່ມນີ້:

**1. ອັດຕາຄ່າທຳນຽມການຊື້-ຂາຍຮຸ້ນ**

**1.1. ອັດຕາຄ່າທຳນຽມການຊື້-ຂາຍຮຸ້ນ ແບບປົກກະຕິ**

| | ອັດຕາຄ່າທຳນຽມ | | ລວມ |
|---|---|---|---|
| | ຊື້ | ຂາຍ | |
| ຕະຫຼາດຫຼັກຊັບ | 0.30% | 0.30% | 0.60% |
| ບໍລິສັດຫຼັກຊັບ | 0.30% | 0.30% | 0.60% |
| ສຳນັກງານ ຄຄຊ | 0.09% | 0.09% | 0.18% |
| ກອງທຶນປົກປ້ອງຄວາມສ່ຽງ | 0.01% | 0.01% | 0.02% |
| ລັດຖະບານ | 0.00% | 0.30% | 0.30% |
| ລວມ | 0.70% | 1.00% | 1.70% |

1.2. ອັດຕາຄ່າທຳນຽມການຊື້-ຂາຍຮຸ້ນ ແບບຜ່ານທາງອິນເຕີເນັດ (HTS)

| | ອັດຕາຄ່າທຳນຽມ | | ລວມ |
|---|---|---|---|
| | ຊື້ | ຂາຍ | |
| ຕະຫຼາດຫຼັກຊັບ | 0.27% | 0.27% | 0.54% |
| ບໍລິສັດຫຼັກຊັບ | 0.27% | 0.27% | 0.54% |
| ສຳນັກງານ ຄຄຊ | 0.08% | 0.08% | 0.16% |
| ກອງທຶນປົກປ້ອງຄວາມສ່ຽງ | 0.01% | 0.01% | 0.02% |
| ລັດຖະບານ | 0.00% | 0.30% | 0.30% |
| ລວມ | 0.63% | 0.93% | 1.56% |

2. ອັດຕາຄ່າທຳນຽມການໂອນຮຸ້ນຈົດທະບຽນ

| | ຕາມສັນຍາ | ຕາມຄຳຕັດສິນ ຫຼື ຄຳພິພາກສາ ຂອງສານ | ຕາມການຮ້ອງຂໍ | ຕາມການສືບທອດມູນມໍລະດົກ ຫຼື ເສຍຊີວິດ |
|---|---|---|---|---|
| ຕະຫຼາດຫຼັກຊັບ | 0.60% | 0.60% | 0.60% | 0.30% |
| ບໍລິສັດຫຼັກຊັບ | 0.60% | 0.60% | 0.60% | 0.30% |
| ສຳນັກງານ ຄຄຊ | 0.18% | 0.18% | 0.18% | 0.09% |
| ກອງທຶນປົກປ້ອງຄວາມສ່ຽງ | 0.02% | 0.02% | 0.02% | 0.01% |
| ລັດຖະບານ | 0.30% | 0.30% | 0.30% | 0.00% |
| ລວມ | 1.70% | 1.70% | 1.70% | 0.70% |

**ມາດຕາ 2.** ສຳນັກງານ ຄຄຊ, ຕະຫຼາດຫຼັກຊັບລາວ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ.

**ມາດຕາ 3.** ຂໍ້ຕົກລົງສະບັບນີ້ ປ່ຽນແທນ ຂໍ້ຕົກລົງວ່າດ້ວຍຄ່າທຳນຽມທີ່ຕະຫຼາດຫຼັກຊັບລາວຕ້ອງປະຕິບັດຕໍ່ສຳນັກງານ ຄລຕ ສະບັບເລກທີ 018/ຄລຕ. ແຈ້ງການ ແລະ ຂໍ້ຕົກລົງໃດ ທີ່ອອກໂດຍ ຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ມາດຕາ 4.** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ ວັນທີ 7 ກັນຍາ 2015 ເປັນຕົ້ນໄປ.

**ປະທານ ຄະນະກຳມະການຄຸ້ມຄອງຫຼັກຊັບ**

ດຣ.ບຸນປອນ ບຸດຕະນະວົງ